# ແຜນການສອນ
# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດ ທີ 25 ກຸມພາ 2007 ( 02-25-2007 )

---

## <u>ຈົ່ງສະແດງຫລັກຖານມາໃຫ້ເຫັນ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ໂຢຮັນ 6:30-31,35-36, 41-47, 66-69

**<u>ພຣະຄັມພີແຫ່ງຄວາມຈິງ:</u>** ການຍອມຮັບວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າແມ່ນສະແດງອອກເຖິງຄວາມເຊື່ອ. ແຕ່ບໍ່ແມ່ນການສລູບທີ່ອີງຕາມຫລັກຖານທີ່ໄດ້ສະແດງອອກ.

**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍໃຫ້ທ່ານຍອມຮັບວ່າພຣະເຢຊູຄຣິດເປັນໃຈກາງແຫ່ງຄວາມເຊື່ອຂອງຄຣິສຕຽນໂດຍ...

- ເບິ່ງເຫັນວ່າຄົນທີ່ປະກາດຢາກຈະເຫັນຫລັກຖານທີ່ສະແດງອອກມາວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້ານັ້ນ ແມ່ນເປັນຄົນທີ່ມີເຈຕະນາທີ່ຈະເຊື່ອໃນພຣະອົງ ແລະ...
- ມອບຕົວທີ່ຈະທ້າທາຍຄົນທັງຫລາຍໃຫ້ຮັບເອົາພຣະເຢຊູດ້ວຍຄວາມເຊື່ອ ແລະບໍ່ພຍາຍາມທີ່ຈະພິສູດໃຫ້ເຂົາເຫັນວ່າພຣະເຢຊູເປັນພຣະບຸດຂອງພຣະເຈົ້າ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນໍາຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນໍາໄປສອນ
4. ອ່ານ "**<u>ແຜນການສອນ</u>**", ຫມາຍບ່ອນສໍາຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສໍາເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈໍານວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສໍາຣວດຈໍານວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈໍາ
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄໍາພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

## <u>ບົດນໍາ:</u>

1. ນໍານັກຮຽນໃຫ້ມອງເຫັນຫລັກຖານການໂຊໃນທີວີ ( ເຊັ່ນຕົວຢ່າງ **NFL's** ຫລິ້ນແລ້ວຫລິ້ນອີກຫລາຍຮອບຫລາຍທົ່ນ. ທີມໜ້າກີລາກໍທ້າທາຍແລ້ວທ້າທາຍອີກ, ບາງເທື່ອກໍເອົາຕໍາຣວດ ຫລືຕໍາຣວດນອກເຄື່ອງແບບມາໂຊອອກໃນ ທີວີ.
2. ບາງເທື່ອການເວົ້າໂຊ ( **talk shows** ) ກໍເອົາຄົນ ແລະສິ່ງຂອງຕ່າງ ໆ ມາສະແດງໃຫ້ເຫັນ) ສົນທະນາວ່າການໂຊຕ່າງ ໆ ເຫລົ່ານີ້ໄດ້ວາດພາບໃຫ້ເຫັນລັກສະນະການເຊື່ອຖືໃນວັທນະທັມຂອງພວກເຮົາເອງນັ້ນໄດ້ພິສູດໃຫ້ພວກເຮົາເຫັນຄວາມຈິງ.

**1. <u>ຫລາຍຄົນຕ້ອງການຫລັກຖານ:</u>** ( ໂຢຮັນ 6:30-31)

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ໂຢຮັນ 6:8-13, ແລ້ວໃຫ້ຜູ້ນຶ່ງອ່ານ ໂຢຮັນ 6:30-31

2) **ຖາມນັກຮຽນວ່າ:** ແມ່ນຫຍັງທີ່ເຮັດໃຫ້ເຂົາທູນຂໍພຣະເຢຊູໃຫ້ເຮັດການອັສຈັນ ທັງທີ່ພຣະອົງຫາກໍລ້ຽງລ້ຽງຄົນ 5,000 ຄົນແລ້ວ (ສະເພາະຜູ້ຊາຍ ) ຖ້າລວມທັງຜູ້ຍິງ ແລະເດັກນ້ອຍໃສ່ກໍເປັນປະມານ 20,000 ຄົນ )

3) ຂຽນ <u>ການພິສູດ</u> ກັບ <u>ການເຊື່ອຟັງ</u> ໃຫ້ນັກຮຽນເລືອກ, ( ພິສູດໃຫ້ເຫັນກ່ອນຈຶ່ງເຊື່ອ ຫລືວ່າ ເຊື່ອຟັງໂລດບໍ່ຕ້ອງພິສູດ). ( ຕົວຢ່າງ: ອາຈານ ຂອງພວກເຮົາຈະນຳພາພວກເຮົາໃຫ້ຈະເຣີນຂື້ນຝ່າຍຈິດວິນຍານ, **DNA** ຂອງພວກເຮົາຈະຖືກກັນກັບລູກຂອງພວກເຮົາ, ລາຍມືຂອງຂ້ອຍຈະຖືກກັນກັບລາຍມືທີ່ຕິດຢູ່ຈອກກາເຟຂອງຂ້ອຍ, ລູກຫລືຫລານຂອງຂ້ອຍໃຫຍ່ຂື້ນມາແລ້ວຂ້ອຍຈະໃຫ້ເປັນຜູ້ຮັບໃຊ້ພຣະເຈົ້າ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂຢຮັນ 6:30-31

1) ສັງຄົມເຮົາທຸກມື້ນີ້ມັກຈະເວົ້າວ່າ: "ສະແດງໃຫ້ຂ້ອຍເບິ່ງດູ ຫລືໃຫ້ຂ້ອຍພິສູດເບິ່ງດູ? ອັນນີ້ທ່ານຄິດວ່າແນວໃດ? "

2) ທ່ານຈະຕອບຜູ້ທີ່ຖາມທ່ານເຖິງຫລັກຖານທີ່ທ່ານອ້າງເຖິງເຣື່ອງພຣະເຢຊູຄຣິດນັ້ນວ່າແນວໃດ?

3) ໃນພຣະຄຳເຫລົ່ານີ້ຊັກຖາມໃຫ້ພຣະເຢຊູເຮັດການອັສຈັນຢ່າງໃດອີກແດ່?

4) ທ່ານຄິດວ່າພຣະເຢຊູຄິດຢ່າງໃດໃນເມື່ອພວກຄົນຢິວຖາມໃຫ້ພຣະອົງເຮັດໝາຍສຳຄັນໃຫ້ເຂົາເບິ່ງ?

5) ກ່ອນທ່ານຈະມາຮັບເຊື່ອທ່ານຕ້ອງການພະຍານຫລັກຖານຫລາຍປານໃດ?

6) ຄຳວ່າພຣະເຢຊູເປັນອາຫານແຫ່ງຊີວິດນັ້ນໝາຍຄວາມວ່າຢ່າງໃດ?

**2. <u>ຫລັກຖານບໍ່ໄດ້ເຮັດໃຫ້ເກີດຄວາມເຊື່ອ:</u>** (ໂຢຮັນ 6:35-36,41-42

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 6:35-36 ແລະ 41-42

2) ພວກຢິວສະແດງຄວາມບໍ່ພໍໃຈໃນເຣື່ອງຫຍັງ?

3) ຄວາມບໍ່ພໍໃຈຂອງເຂົາໄດ້ຊີ້ໃຫ້ພວກເຮົາສລູບໄດ້ວ່າການພິສູດຂອງເຂົາບໍ່ໄດ້ເຮັດໃຫ້ພວກເຮົາຮັບຜົນຂອງການເຊື່ອຟັງແນວໃດ?

4) ປຽບທຽບຄວາມບໍ່ພໍໃຈຂອງພວກຢິວກັບຄວາມບໍ່ພໍໃຈຂອງພວກເຮົາໃນສມັຍນີ້ມີຫຍັງແດ່ທີ່ຄ້າຍຄືກັນ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ໂຢຮັນ 6:35-36 ແລະ 41-42

1. ກ່ອນທ່ານຈະມາເປັນຄຣິສຕຽນ, ມີຫລັກຖານອັນໃດທີ່ທ່ານຕ້ອງການຈາກພຣະເຢຊູ?
2. ຖ້າຫາກມີຜູ້ໃດຜູ້ນຶ່ງພົບເຮືອຂອງ ໂນອາ ຈະມີຄົນເຊື່ອແລະຍົກໂນອາໃຫ້ເປັນພຣະເຈົ້າບໍ່? ເພາະດ້ວຍເຫດໃດຈຶ່ງເຊື່ອແລະດ້ວຍເຫດໃດຈຶ່ງບໍ່ເຊື່ອ?
3. ເປັນດ້ວຍເຫດໃດຄົນຈຶ່ງອະທິບາຍຫລັກຖານການພິສູດນີ້ໄປຄົນລະແງ່ມູມທັ້ງ ໆ ທີ່ເຂົາໄດ້ພົບເຫັນ?

4) ເປັນການຫຍຸ້ງຍາກສັບສົນໃຫ້ກັບຄວາມເຊື່ອຂອງທ່ານບໍ່ ທີ່ຄົນເຫລົ່ານັ້ນໄດ້ເຫັນພຣະເຢຊູແລ້ວແຕ່ຍັງຕ້ອງການຫລັກຖານ ແລະພິສູດຈາກພຣະອົງຢູ່? ເປັນເພາະເຫດໃດ?

**3. <u>ຄວາມເຊື່ອແມ່ນງານຂອງພຣະເຈົ້າ:</u>** ໂຢຮັນ 6:43-47

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມໂຢຮັນ 6:43-47

2) ພິຈາຣະນາເບິ່ງປໂຍກທີ່ວ່າ: " ຄົນທັງຫລາຍຈະຮັບຄວາມສອນຈາກພຣະເຈົ້າ " ຂໍ້ 45.

3) ມີທາງໃດແດ່ທີ່ພວກເຮົາໄດ້ຮັບຄວາມສອນຈາກພຣະເຈົ້າ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ** ໂຢຮັນ 6:43-47

1. ພຣະຄຳເຫລົ່ານີ້ໄດ້ນຳຄວາມສະດວກໃຫ້ແກ່ຜູ້ທີ່ຊອກຫາຫລັກຖານພຍານຈາກພຣະເຢຊູຄຣິດໄດ້ຢ່າງໃດ?
2. ພຣະເຈົ້າໄດ້ນຳທ່ານມາຫາພຣະອົງດ້ວຍພຣະອົງເອງຢ່າງໃດ?

3. ເປັນຫຍັງທ່ານຈຶ່ງຄິດວ່າ ພຣະເຈົ້າມີແຜນການດ້ານຄວາມເຊື່ອຟັງນັ້ນເປັນງານຂອງພຣະອົງ ເປັນຍັງບໍ່ໃຫ້ເປັນງານຂອງມະນຸດ?

4. ໃນການເຊື່ອຟັງຂອງທ່ານໄດ້ເຮັດໃຫ້ທ່ານເຂົ້າໃຈວ່າຄວາມເຊື່ອຟັງນັ້ນແມ່ນການກະທຳຂອງພຣະເຈົ້າໄດ້ຢ່າງໃດ?

4. __ຄວາມເຊື່ອທີ່ປາສຈາກຫລັກຖານ:__ ໂຢຮັນ 6:66-69

1) ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຢຮັນ 6:66-69

2) ຖ້າເອົາຄຳກິຣິຍາໃນປໂຍກທີ່ວ່າ " ເຊື່ອແລ້ວແລະ ຮູ້ " ( ຂໍ້ 69 ) ໃຫ້ເຫັນການກະທຳທີ່ສຳເຣັດແລ້ວ ກັບການດຳເນີນຕໍ່ໄປເພື່ອຊີ້ໃຫ້ເຫັນຜົນການໄດ້ຮັບ.

3) ພວກເຮົາມາເຊື່ອກ່ອນແລ້ວຈຶ່ງເອົາຫລັກຖານມາສນອງຄວາມເຂົ້າໃຈເພື່ອເປັນຜົນຂອງຄວາມເຊື່ອ.

4) ໃຫ້ຕອບສນອງຄຳຖາມຂອງພຣະເຢຊູທີ່ວ່າ: " ພວກທ່ານເດຢາກຖອຍໜີເໝືອນກັນຫລື? " ( ຂໍ້ 67 )

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ: ໂຢຮັນ 6:66-69**

1) ໃນພຣະຄຳເຫລົ່ານີ້ໄດ້ຊີ້ໃຫ້ເຫັນວ່າ ບໍ່ມີສິ່ງໃດເປັນສູນກາງຂອງພຣະອົງນັ້ນເພາະເຫດໃດ?

2) ຈາກຊີວິດຂອງທ່ານທີ່ທ່ານຊ່ອຍຄົນອື່ນໃຫ້ເຂົ້າໃຈວ່າເຊື່ອຟັງ ແລະເຊື່ອບໍ່ຕ້ອງການພິສູດນັ້ນທ່ານໄດ້ໃຊ້ຕົວຢ່າງອັນໃດມາປຽບທຽບ?

3) ເປັນຫຍັງເປໂຕຈຶ່ງໃຊ້ທາງຂອງທ່ານເອງເປັນຕົວຢ່າງໃຫ້ຄົນອື່ນໄດ້ເຂົ້າໃຈ?

4) ຖ້າຫາກທ່ານເວົ້າເຣື່ອງພຣະເຢຊູຄຣິດໃຫ້ເພື່ອນຂອງທ່ານຟັງ ແລ້ວລາວຖາມໃຫ້ທ່ານສະແດງຫລັກຖານພຍານໃຫ້ລາວເບິ່ງ ທ່ານຈະເຮັດວິທີໃດ?

__ສລູບ:__

1. ພວກເຮົາຕ້ອງຍອມຮັບວ່າພຣະເຢຊູຄຣິດເປັນພຣະເຈົ້າ, ເປັນພຣະບຸດ ທີ່ທຳກິຈການງານດ້ວຍການເຊື່ອຟັງພຣະບິດາ ແລະບໍ່ຈຳເປັນມີພື້ນຖານບາງສິ່ງບາງຢ່າງມາພິສູດ ແລະທົດລອງ.
2. ແນະນຳໃຫ້ນັກຮຽນອ່ານລົ້ມຄືນບົດຮຽນໃນເດືອນນີ້ທັງໝົດເພື່ອເສີມສ້າງຈິດວິນຍານແລະຄວາມເຊື່ອ, ຄວາມເຂົ້າໃຈໃຫ້ຫລາຍຂຶ້ນ.
3. ນຳເອົາສິ່ງທີ່ຮຽນມາໃຊ້ໃນການດຳເນີນຊີວິດຄຣິສຕຽນຂອງຕົນໃຫ້ພຣະເຈົ້າໄດ້ຮັບກຽດ.
4. ໃຫ້ສາມາດເປັນພຍານອະທິບາຍໄດ້ວ່າ: ພຣະເຢຊູເປັນພຣະບຸດຂອງພຣະເຈົ້າ ແລະເປັນພຣະເຈົ້າໃຫ້ຄົນອື່ນເຂົ້າໃຈໄດ້.
5. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນຫຍັງແດ່ໃນມື້ນີ້.
6. ອະທິຖານຂໍໃຫ້ພຣະເຈົ້າຊ່ອຍທຸກຄົນໃຫ້ໄປບອກເຣື່ອງພຣະເຢຊູຄຣິດແກ່ຄົນອື່ນ ແລະອະທິຖານປິດຫ້ອງຮຽນ.